# ທີ່ພັກອາໄສທີ່ເປັນທັມ ແລະກົດລະບຽບໃໝ່ສຳລັບການບໍລິການການກູ້ຢືມເພື່ອການເຄຫະ

FAIR HOUSING COUNCIL OF OREGON

ມັນເປັນການຜິດກົດໝາຍສຳລັບທະນາຄານ ຫຼື ຜູ້ໃຫ້ບໍລິການເງິນກູ້ຢືມ ທີ່ຈະຈຳແນກຕ້ານຕໍ່ທ່ານອັນເນື່ອງຈາກຊົນຊັ້ນທີ່ໄດ້ຮັບການປົກປ້ອງຂອງທ່ານ.

ມີກົດລະບຽບໃໝ່ທີ່ທາງບັນດາທະນາຄານ ແລະຜູ້ໃຫ້ບໍລິການຕ່າງໆ ຕ້ອງປະຕິບັດຕາມ ຊຶ່ງຈະຊ່ວຍທ່ານ:

- ທ່ານຕ້ອງໄດ້ຮັບຂໍ້ຄວາມກ່າວທີ່ມີຂໍ້ມູນຊັດເຈນກ່ຽວກັບວ່າ ທ່ານຕ້ອງຈ່າຍເທົ່າໃດ ຖ້າຫາກ ທ່ານຖືກເກັບຄ່າທຳນຽມ.
- ທ່ານຕ້ອງໄດ້ຮັບຂໍ້ມູນສຳລັບການຕິດຕໍ່.
- ທ່ານຕ້ອງໄດ້ຮັບຂໍ້ມູນກ່ຽວກັບເຈົ້າໜ້າທີ່ໃຫ້ຄຳປຶກສາດ້ານທີ່ພັກອາໄສ.

ຖ້າຫາກ ທ່ານຈ່າຍເງິນຄ່າເຮືອນຂອງທ່ານຊ້າ ທ່ານມີສິດທີ:

- ທ່ານມີສິດທີ່ຈະຮ້ອງຂໍໃຫ້ມີການດັດປັບເງິນກູ້ຢືມ, ໂດຍອະນຸຍາດໃຫ້ທ່ານປ່ຽນເງື່ອນໄຂຂອງເງິນກູ້ຢືມຂອງທ່ານ. ຍົກຕົວຢ່າງ ການດັດປັບສາມາດປ່ຽນຈຳນວນເງິນຈ່າຍຂອງທ່ານ ຫຼື ອັດຕາດອກເບັ້ຍເງິນກູ້ຢືມຂອງທ່ານ.
- ທ່ານມີສິດທີ່ຈະເວົ້າກັບໃຜຜູ້ໜຶ່ງທາງໂທຣະສັບ.
- ເມື່ອທ່ານຍື່ນໃບຄຳຮ້ອງຂໍການດັດປັບເງິນກູ້ຢືມ, ທາງທະນາຄານ ຫຼື ຜູ້ໃຫ້ບໍລິການມີເວລາຫ້າວັນເພື່ອໃຫ້ທ່ານຮູ້ວ່າ ຖ້າວ່າ ຄຳຮ້ອງຂໍຂອງທ່ານສົມບູນຄົບຖ້ວນ ຫຼືບໍ່.
- ຖ້າວ່າ ຍັງບໍ່ສົມບູນຄົບຖ້ວນ, ເຂົາເຈົ້າຕ້ອງບອກທ່ານວ່າ ມີຂໍ້ມູນອື່ນຫຍັງອີກບໍ່ທີ່ທ່ານຈຳເປັນຕ້ອງຈັດຫາໃຫ້.
- ເຖິງແມ່ນວ່າ ທ່ານບໍ່ໄດ້ເຮັດຄຳຮ້ອງຂໍການຊ່ວຍເຫຼືອ, ທາງທະນາຄານ ຫຼື ຜູ້ໃຫ້ບໍລິການຕ້ອງພະຍາຍາມຕິດຕໍ່ຫາທ່ານພາຍໃນ 36 ວັນຫຼັງຈາກທ່ານບໍ່ໄດ້ໄປຊຳລະເງິນ.

ວຽກທີ່ເປັນພື້ນຖານສຳລັບການຕີພິມນີ້ແມ່ນໄດ້ຮັບການສະໜັບສະໜູນ ຈາກກອງທຶນພາຍໃຕ້ທຶນຊ່ວຍເຫຼືອຂອງກະຊວງດູແລທີ່ພັກອາໄສແລະການພັດທະນາເມືອງຂອງສະຫະຣັຖອາເມລິກາ. ເນື້ອໃນແລະວຽກນີ້ແມ່ນອຸທິດໃຫ້ແກ່ສາທາລະນະ. ຜູ້ແຕ່ງແລະຜູ້ພິມຮັບຜິດຊອບແຕ່ພຽງຜູ້ດຽວຕໍ່ຄວາມຖືກຕ້ອງຂອງຂໍ້ຄວາມແລະການຕີຄວາມທີ່ບັນຈຸຢູ່ໃນສິ່ງຕີພິມນີ້. ການຕີຄວາມດັ່ງກ່າວບໍ່ຈຳເປັນຕ້ອງສະທ້ອນເຖິງຄວາມຄິດເຫັນຂອງຣັຖບານກາງ.